ໂຄງການ ກໍ່ສ້າງພື້ນຖານໂຄງລ່າງເສດຖະກິດໝຸນວຽນ ສຳລັບ ການດຳເນີນງານ ວຽກງານສາທາລະນະສຸກ ຢູ່ ແຂວງຊຽງຂວາງ, ສປປ ລາວ

ສະຖານທີ່ໂຄງການ:	ອາຊີ / ສປປ ລາວ
ໄລຍະດຳເນີນໂຄງການ:	ທັນວາ 2025 ~ ທັນວາ 2027
ງົບປະມານໂຄງການ:	560,000 ໂດລາສະຫະລັດ
ຫົວຂໍ້:	ການບໍລິຫານຄຸ້ມຄອງຂີ້ເຫຍື້ອຢູ່ສະຖານທີ່ບໍລິການສາທາລະນະສຸກ / ເສດຖະກິດໝຸນວຽນ
ລະຫັດໂຄງການ:	LA045

ຜູ້ໃຫ້ທຶນ

KOFIH

ອົງການຈັດຕັ້ງຄູ່ຮ່ວມງານ

World Health Organization

ເນື້ອໃນໂຄງການໂດຍສັງເຂບ

ໂຄງການນີ້ໄດ້ສ້າງພື້ນຖານໂຄງລ່າງ ເສດຖະກິດໝຸນວຽນ ທີ່ເປັນການຫັນປ່ຽນຮູບແບບໃໝ່ ສຳລັບການດຳເນີນງານດ້ານການບໍລິຫານຄຸ້ມຄອງຂີ້ເຫຍື້ອຢູ່ສະຖານທີ່ບໍລິການສາທາລະນະສຸກໃນທົ່ວແຂວງຊຽງຂວາງ. ໂຄງການດັ່ງກ່າວຈະນຳເອົາຕົວແບບຂອງການຟື້ນຟູຊັບພະຍາກອນ ກັບມາໃຊ້ຄືນ ຈາກໂຮງໝໍແຂວງ 1 ແຫ່ງ ແລະ ໂຮງໝໍເມືອງ 5 ແຫ່ງ, ພ້ອມທັງຈະສ້າງລະບົບບຳບັດຂີ້ເຫຍື້ອສາທາລະນະສຸກທີ່ເປັນອັນຕະລາຍແບບລວມສູນ ຢູ່ເມືອງແປກ ໂດຍນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ທີ່ມີການຜະລິດກາກບອນຕ່ຳ. ດ້ວຍການນຳໃຊ້ລະບົບການຂົນສົ່ງຂີ້ເຫຍື້ອທີ່ທັນສະໄໝ ແລະ ການຫັນປ່ຽນຂີ້ເຫຍື້ອທີ່ຄັດແຍກແລ້ວມາສ້າງລາຍໄດ້, ໂຄງການນີ້ຖືວ່າເປັນການປະກອບສ່ວນໂດຍກົງເຂົ້າໃນ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ແລະ ແຜນການປັບຕົວດ້ານສາທາລະນະສຸກ ຂອງ ສປປ ລາວ. ທັງໝົດນີ້ ກໍເພື່ອສ້າງລະບົບການຈັດການຂີ້ເຫຍື້ອທີ່ເຂັ້ມແຂງ, ມີຄວາມທົນທານກັບສະພາບພູມອາກາດທີ່ປ່ຽນແປງໄດ້, ເພື່ອເປັນມາດຕະຖານລະດັບຊາດ ກໍຄືໃນຂົງເຂດອະນຸລຸ່ມແມ່ນ້ຳຂອງ.

ຈຸດປະສົງຂອງໂຄງການ

- **ສ້າງຄວາມເຂັ້ມແຂງໃຫ້ແກ່ລະບຽບການ ແລະ ຂີດຄວາມສາມາດດ້ານເຕັກນິກ** ເພື່ອການບໍລິຫານຄຸ້ມຄອງຂີ້ເຫຍື້ອຢູ່ສະຖານທີ່ບໍລິການສາທາລະນະສຸກແບບຍືນຍົງ.
- **ກຳນົດມາດຕະຖານການຄັດແຍກຂີ້ເຫຍື້ອ ແລະ ຕິດຕັ້ງພື້ນຖານໂຄງລ່າງ** ສຳລັບການເກັບມ້ຽນທີ່ປອດໄພ ຢູ່ໂຮງໝໍເປົ້າໝາຍທັງ 6 ແຫ່ງ.
- **ປັບປຸງລະບົບການຂົນສົ່ງ ແລະ ການບຳບັດໃຫ້ມີປະສິດທິພາບສູງສຸດ** ເພື່ອຮັບປະກັນການບຳບັດຂີ້ເຫຍື້ອທີ່ປອດໄພ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມໃຫ້ໜ້ອຍທີ່ສຸດ.

ແນວທາງຍຸດທະສາດ

- **ການສ້າງພື້ນຖານໂຄງລ່າງແບບລວມສູນ** - ກໍ່ສ້າງເຕົາເຜົາຂີ້ເຫຍື້ອສະເພາະ ທີ່ໃຊ້ຄວາມຮ້ອນສູງ ທີ່ມີລະບົບຄວບຄຸມມົນລະພິດທາງອາກາດທີ່ທັນສະໄໝ ຢູ່ເມືອງແປກ ເພື່ອຮອງຮັບການບຳບັດຂີ້ເຫຍື້ອສາທາລະນະສຸກຈາກ 6 ເມືອງ.
- **ການບຳບັດຂີ້ເຫຍື້ອກັບທີ່ ທີ່ເປັນມິດຕໍ່ສິ່ງແວດລ້ອມ** - ຕິດຕັ້ງເຄື່ອງອົບຂ້າເຊື້ອ ເພື່ອບຳບັດຂີ້ເຫຍື້ອໂດຍບໍ່ໃຊ້ການເຜົາໄໝ້, ຮັບປະກັນການກຳຈັດຂີ້ເຫຍື້ອຕິດເຊື້ອຢ່າງປອດໄພ ແລະ ບໍ່ປ່ອຍອາຍພິດທີ່ເປັນອັນຕະລາຍຕໍ່ສິ່ງແວດລ້ອມ.
- **ການຫັນປ່ຽນຂີ້ເຫຍື້ອມາເປັນຊັບພະຍາກອນ** - ຈັດຕັ້ງປະຕິບັດການຄັດແຍກຂີ້ເຫຍື້ອຢູ່ຕົ້ນທາງຢ່າງເຂັ້ມງວດ ເພື່ອຫຼຸດຜ່ອນປະລິມານຂີ້ເຫຍື້ອ, ນຳເອົາຂີ້ເຫຍື້ອທີ່ສາມາດນຳມາໃຊ້ໃໝ່ ໄປໝຸນວຽນ ເພື່ອສ້າງເປັນລາຍໄດ້ເສີມໃຫ້ແກ່ໂຮງໝໍ.
- **ລະບົບການຂົນສົ່ງທີ່ເປັນມິດຕໍ່ສິ່ງແວດລ້ອມ**- ນຳໃຊ້ຍານພາຫະນະຂົນສົ່ງທີ່ປ່ອຍກາກບອນຕ່ຳ ເພື່ອເຄື່ອນຍ້າຍຂີ້ເຫຍື້ອສາທາລະນະສຸກ ແລະ ຂີ້ເຫຍື້ອອັນຕະລາຍທີ່ຄັດແຍກແລ້ວ ຈາກທັງ 6 ເມືອງ ໄປສູ່ສູນບຳບັດຈຸດສູນກາງຢ່າງປອດໄພ.



ຂີ້ເຫຍື້ອສາທາລະນະສຸກທີ່ເປັນອັນຕະລາຍ
© Chennoury K, GGGI Lao PDR

ສະພາບສະໜາມກຳຈັດຂີ້ເຫຍື້ອໃນປັດຈຸບັນ ທີ່ຍັງມີຄວາມສ່ຽງ ແລະ ບໍ່ທັນຮັບປະກັນຄວາມປອດໄພ ຢູ່ແຂວງຊຽງຂວາງ.
©Thidalath V, GGGI Lao PDR

ສະຖານທີ່ເກັບມ້ຽນ ແລະ ຄັດແຍກຂີ້ເຫຍື້ອ.
©Thidalath V, GGGI Lao PDR

ລະບົບບຳບັດຂີ້ເຫຍື້ອອັນຕະລາຍແບບລອມສູນ ຈາກສະຖານທີ່ບໍລິການສາທາລະນະສຸກ ທີ່ ເມືອງແປກ

ສ້າງເສດຖະກິດໝຸນວຽນ ຜ່ານການຄຸ້ມຄອງຂີ້ເຫຍື້ອ ສາທາລະນະສຸກ ແບບທັນສະໄໝ.

ການສ້າງ ລະບົບບຳບັດຂີ້ເຫຍື້ອອັນຕະລາຍແບບລອມສູນ ຈາກສະຖານທີ່ບໍລິການສາທາລະນະສຸກ ທີ່ ເມືອງແປກ ເປັນໂຄງລ່າງພື້ນຖານທີ່ສຳຄັນ ແລະ ເປັນແຜນງານຫຼັກ ຂອງໂຄງການນີ້ ຜ່ານການປະສົມປະສານເຕັກໂນໂລຊີທີ່ບໍ່ໃຊ້ການເຜົາໄໝ້ ເຂົ້າກັບ ລະບົບເຕົາເຜົາຄວາມຮ້ອນສູງໄດ້ມາດຕະຖານສູງມີລະບົບຄວບຄຸມມົນລະພິດທາງ ອາກາດ, ເຊິ່ງເປັນໂຮງງານດັ່ງກ່າວແມ່ນມີຄວາມປອດໄພ ແລະ ມີຄວາມທົນທານຕໍ່ ການປ່ຽນແປງສະພາບພູມມີອາກາດ ໃຫ້ແກ່ສະຖານທີ່ບໍລິການສາທາລະນະສຸກ 6 ແຫ່ງ ໃນຫົວແຂວງຊຽງຂວາງ. ຮູບແບບດັ່ງກ່າວບໍ່ພຽງແຕ່ຮັບປະກັນການກຳຈັດຂີ້ ເຫຍື້ອອັນຕະລາຍຈາກສະຖານທີ່ບໍລິການສາທາລະນະສຸກ ຢ່າງຖືກຕ້ອງຕາມຫຼັກການ ເທົ່ານັ້ນ, ແຕ່ຍັງໄດ້ສ້າງລະບົບທີ່ສາມາດຫັນປ່ຽນວັດສະດຸທີ່ນຳມາໃຊ້ໃໝ່ໃຫ້ກາຍເປັນ ລາຍໄດ້, ເຊິ່ງຖືເປັນການສ້າງມາດຕະຖານໃໝ່ໃຫ້ແກ່ການດຳເນີນງານດ້ານເສດຖະກິດ ໝຸນວຽນ ທີ່ສາມາດຂະຫຍາຍຜົນໄດ້ໃນລະດັບພາກພື້ນ.

ສະໜາມກຳຈັດຂີ້ເຫຍື້ອຂອງແຂວງ.
©Souksawath S, GGGI Lao PDR

ສະພາບການ ແລະ ຄວາມເປັນມາ

ໃນຫົວແຂວງຊຽງຂວາງ, ສະຖານທີ່ບໍລິການສາທາລະນະສຸກຕ່າງໆແມ່ນຜະລິດຂີ້ເຫຍື້ອ ປະມານ 14,600 ໂຕນຕໍ່ປີ, ແຕ່ເຖິງຢ່າງໃດກໍຕາມ ການຄຸ້ມຄອງຈັດການແມ່ນຍັງມີ ຄວາມສ່ຽງ ແລະ ບໍ່ທັນຮັບປະກັນຄວາມປອດໄພ. ການຈັດຕັ້ງປະຕິບັດໃນປັດຈຸບັນ ແມ່ນຍັງອີງໃສ່ການເຜົາໄໝ້ແບບເປີດໃຊ້ຄວາມຮ້ອນຕ່ຳ ແລະ ການຝັງກົບແບບບໍ່ໄດ້ ມາດຕະຖານ, ເຊິ່ງເຮັດໃຫ້ມີການປະປົນຂອງຂີ້ເຫຍື້ອອັນຕະລາຍແລະຂີ້ເຫຍື້ອ ເທດສະບານໃນການກຳຈັດສຸດທ້າຍ.

ສະໜາມກຳຈັດຂີ້ເຫຍື້ອຂອງແຂວງ.
©Souksawath X, GGGI Lao PDR

ມີພຽງແຕ່ 30% ຂອງສະຖານທີ່ບໍລິການສາທາລະນະສຸກເທົ່ານັ້ນ ທີ່ປະຕິບັດຕາມຂັ້ນ ຕອນການຂ້າເຊື້ອຢ່າງຖືກຕ້ອງ. ສະພາບການດັ່ງກ່າວໄດ້ກໍ່ໃຫ້ເກີດຄວາມສ່ຽງສູງຕໍ່ການ ຕິດເຊື້ອຕໍ່ເນື່ອງ ແລະ ການປົນເປື້ອນຂອງສານພິດຕໍ່ສິ່ງແວດລ້ອມ ໃນເຂດພື້ນທີ່ອັນລໍ້າ ຄ່າ ເຊິ່ງເປັນທີ່ຕັ້ງຂອງແຫຼ່ງມໍລະດົກໂລກ (ທົ່ງໄຫຫີນ). ໂຄງການນີ້ ຈຶ່ງຖືກສ້າງຕັ້ງຂຶ້ນ ເພື່ອແກ້ໄຂຊ່ອງຫວ່າງເຫຼົ່ານີ້ ໂດຍການຫຼຸດຜ່ອນການປ່ອຍກາສເຮືອນແກ້ວ ແລະ ຫຼຸດຜ່ອນອັນຕະລາຍຕໍ່ສຸຂະພາບຂອງຊຸມຊົນ ທີ່ເກີດຈາກການກຳຈັດຂີ້ເຫຍື້ອທີ່ບໍ່ຖືກ ວິທີ.


ການຕັບມ້ຽນອັດຖຸອັນຕະລາຍ ຢູ່ພາຍໃນໂຮງໝໍ.
©GGGI Lao PDR

ຜົນໄດ້ຮັບທີ່ຄາດໄວ້ ແລະ ຜົນໄດ້ຮັບຂອງໂຄງການ

ໂຄງການນີ້ແມ່ນການສົ່ງເສີມເສດຖະກິດໝຸນວຽນຢ່າງຮອບດ້ານຢູ່ແຂວງຊຽງຂວາງ, ເຊິ່ງຈະສ້າງຜົນປະໂຫຍດອັນມະຫາສານໃຫ້ແກ່ລະບົບສາທາລະນະສຸກ ແລະ ຊຸມຊົນ ທ້ອງຖິ່ນ. ຜົນໄດ້ຮັບທີ່ສຳຄັນລວມມີ: ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບຽບການ ແລະ ນິຕິກຳທີ່ກ່ຽວຂ້ອງ, ການຍົກລະດັບຍີດຄວາມສາມາດດ້ານວິຊາການ ໃຫ້ແກ່ ພະນັກງານທີ່ກ່ຽວຂ້ອງ, ການປັບປຸງພື້ນຖານໂຄງລ່າງ ສຳລັບການຈັດການຂີ້ເຫຍື້ອໃຫ້ ມີຄວາມທັນສະໄໝ, ການນຳໃຊ້ເຕັກໂນໂລຊີບຳບັດແບບບໍ່ໃຊ້ການເຜົາໄໝ້ ທີ່ເປັນ ມິດຕໍ່ສິ່ງແວດລ້ອມ, ການສ້າງລະບົບການຂົນສົ່ງທີ່ປ່ອຍກາກບອນຕ່ຳ ແລະ ມີຄວາມ ປອດໄພ ການຫຼຸດຜ່ອນການນຳເອົາຂີ້ເຫຍື້ອອັນຕະລາຍໄປຝັງກົບ ຢູ່ສະໜາມຂີ້ ເຫຍື້ອ ແລະ ການພັດທະນາມາດຕະຖານການດຳເນີນງານ ທີ່ມີຄວາມທົນທານຕໍ່ການ ປ່ຽນແປງສະພາບພູມອາກາດ.

100%
(ຄາດໝາຍ) ຂອງໂຮງໝໍເປົ້າໝາຍທັງ 6 ແຫ່ງ ທີ່ຈັດຕັ້ງ ປະຕິບັດການຄັດແຍກຂີ້ເຫຍື້ອຢ່າງຖືກຕ້ອງ.

ລະບົບບຳບັດແບບລອມສູນ 1 ແຫ່ງ
ສ້າງສິ່ງອຳນວຍຄວາມສະດວກທີ່ສາມາດດຳເນີນງານໄດ້ ເພື່ອຄວາມປອດໄພໃນຫົວແຂວງ.

2 ນະໂຍບາຍ
ເຊື່ອມສານການຄຸ້ມຄອງຂີ້ເຫຍື້ອສາທາລະນະສຸກເຂົ້າໃນ ລະບຽບການຄຸ້ມຄອງຂີ້ເຫຍື້ອເທດສະບານ ແລະ ປັບປຸງຄ່າ ທຳນຽມການຈັດການຂີ້ເຫຍື້ອສາທາລະນະສຸກ ສຳລັບແຂວງ ຊຽງຂວາງ.

ຮູບຖ່າຍລວມຂອງບັນດາຜູ້ຮ່ວມງານໂຄງການ ຢູ່ຕໍ່ໜ້າໂຮງໝໍແຂວງຊຽງຂວາງ
©Chennoury K. GGGI Lao PDR

www.gggi.org

GGGI ປະຈຳ ສປປ ລາວ
ຊັ້ນ 3, ກົມແຜນການ, ກະຊວງການເງິນ,
ຖະໜົນສຸພານຸວົງ, ນະຄອນຫຼວງວຽງຈັນ, ສປປ ລາວ
laos@gggi.org

ສຳນັກງານໃຫຍ່
ຕຶກ Jeongdong ຊັ້ນ 19 , 21-15 Jeongdong-gil Jung-gu,
ນະຄອນຫຼວງໂຊລ, ສ. ເກົາຫຼີ
communications@gggi.org

ຕິດຕາມກິດຈະກຳຂອງພວກເຮົາໄດ້ທີ່: